ສະໜັບສະໜູນ ໂດຍ:

SOS BØRNEBYERNE

SOS CHILDREN'S VILLAGES LAOS

MASCOT® WORKWEAR

ຮສສ



ສະແກນຄິວອາໂຄດ
ເພື່ອສະໝັກອອນລາຍ

## ຂໍ້ມູນໂດຍຫຍໍ້ກ່ຽວກັບໂຄງການ

ໂຄງການບ້ານຊ່ວຍເຫຼືອເດັກນ້ອຍ ເອັສໂອເອັສ ລາວ ໄດ້ເລີ່ມຕົ້ນຈັດຕັ້ງປະຕິບັດມາແຕ່ປີ 1993, ຊຶ່ງລັດຖະບານແຫ່ງ ສປປ ລາວ ໄດ້ຕົກລົງເຫັນດີ ຮັບເອົາການຊ່ວຍເຫຼືອຈາກອົງການບ້ານຊ່ວຍເຫຼືອເດັກນ້ອຍ ເອັສໂອເອັສ ສາກົນ  ເພື່ອເປັນບ່ອນຢູ່ອາໄສສໍາລັບເດັກ ກໍາພ້າ - ກໍາພອຍ  ທີ່ຂາດບ່ອນເພິ່ງພາອາໄສ, ຂາດຜູ້ເບິ່ງແຍງລ້ຽງດູ. ບ້ານຊ່ວຍເຫຼືອເດັກນ້ອຍ ເອັສໂອເອັສ ລາວ ໄດ້ໃຫ້ການດູແລເບິ່ງແຍງດ້ວຍຄວາມຮັກ, ຄວາມອົບອຸ່ນ,  ຕາມຫຼັກການຂອງອົງການ ເອັສໂອເອັສ ສາກົນ ແລະ ສອດຄ່ອງກັບຮີດຄອງປະເພນີອັນດີງາມຂອງລາວ ຄື: ເປັນແມ່ເປັນລູກກັນ, ເປັນອ້າຍເອື້ອຍນ້ອງກັນ, ເປັນຄອບຄົວດຽວກັນ ແລະ ເປັນບ້ານດຽວກັນ, ໃຫ້ເດັກນ້ອຍໄດ້ຮັບການລ້ຽງດູເບິ່ງແຍງຊີວິດການເປັນຢູ່, ສຸຂະພາບ, ໄດ້ຮັບການສຶກສາ ແລະ ມີອາຊີບ.

# ໂຄງການ ສ້າງວິຊາຊີບ-ສ້າງອະນາຄົດ

**ສ້າງຄວາມສາມາດຂອງໄວໜຸ່ມລາວ ເພື່ອເຂົ້າເຖິງການຈ້າງງານ ແລະ ການປະກອບທຸລະກິດ**



## ສອບຖາມຂໍ້ມູນເພີ່ມຕື່ມ:


**ໂຄງການບ້ານຊ່ວຍເຫຼືອເດັກນ້ອຍ ເອັສໂອເອັສ ລາວ**
ຖະໜົນໄກສອນພົມວິຫານ (ຫຼັກ 6) ບ້ານ ສີວິໄລ, ເມືອງ ໄຊທານີ, ນະຄອນຫຼວງວຽງຈັນ, ສປປ ລາວ

**ໂທ/ວັອດແອັບ** : 555 05569 / 020 5873 2392
**ໂທລະສັບ** : 021 710 544

SOS Children's Villages Laos Facebook


SOS Children's Villages Laos

## ກິດຈະກຳຫຼັກຂອງໂຄງການ

1. **ການຝຶກອົບຮົມທັກສະຊີວິດ** ໃຫ້ແກ່ໄວໜຸ່ມ ເພື່ອໃຫ້ເຂົາເຈົ້າມີຄວາມໝັ້ນໃຈໃນຕົວເອງ, ມີເປົ້າໝາຍໃນຊີວິດ, ມີທັກສະທີ່ຈຳເປັນຢູ່ໃນບ່ອນເຮັດວຽກ ແລະ ການດຳລົງຊີວິດ.
2. **ສະໜັບສະໜູນທຶນການສຶກສາໃນລະດັບອາຊີວະສຶກສາ 2-3 ປີ** ເພື່ອຍົກລະດັບການສຶກສາໃຫ້ແກ່ໄວໜຸ່ມ ຢູ່ຕາມບັນດາວິທະຍາໄລຕ່າງໆ ໃນນະຄອນຫຼວງວຽງຈັນ.
3. **ສະໜັບສະໜູນການຮຽນວິຊາຊີບໄລຍະສັ້ນ 3-9 ເດືອນ** ສົ່ງເສີມການຮຽນ ເຕັກນິກ/ວິຊາຊີບຕ່າງໆ ລວມທັງພາສາຕ່າງປະເທດ ແລະ ຄອມພິວເຕີ.
4. **ສະໜັບສະໜູນການລົງຝຶກງານ** ກັບບໍລິສັດ ແລະ ອົງການຕ່າງໆ ເພື່ອກຽມພ້ອມ ແລະ ສ້າງໂອກາດໃນການເຮັດວຽກ.
5. **ສະໜັບສະໜູນການຝຶກອົບຮົມກ່ຽວກັບການປະກອບທຸລະກິດ** ແລະ ສາມາດສະເໜີຂໍທຶນເລີ່ມຕົ້ນທຸລະກິດຂະໜາດນ້ອຍ.
6. **ຮ່ວມມືກັບວິທະຍາໄລ/ສະຖາບັນຕ່າງໆ** ເພື່ອນຳເອົາ ຄູ່ມືທັກສະຊີວິດ ໄປປະສົມປະສານເຂົ້າໃນຫຼັກສູດການຮຽນການສອນຂອງໂຮງຮຽນ ແລະ ອີກຫຼາກຫຼາຍກິດຈະກຳ.

ໂຄງການບ້ານຊ່ວຍເຫຼືອເດັກນ້ອຍ ເອັສໂອເອັສ ລາວ, ກຳລັງຈັດຕັ້ງປະຕິບັດ ໂຄງການໃໝ່ ຊື່ວ່າ **ໂຄງການສ້າງວິຊາຊີບ-ສ້າງອະນາຄົດ ຫຼື "Skills4Work Project"** ເພື່ອຊ່ວຍເຫຼືອໄວໜຸ່ມທີ່ຂາດໂອກາດໃນການປະກອບອາຊີບ/ການຈ້າງງານ ຢູ່ໃນ ສປປ ລາວ ໂດຍບໍ່ຈຳແນກເພດ, ສາສະໜາ ແລະ ຄວາມເຊື່ອ ເພື່ອໃຫ້ສາມາດຂ້າມຜ່ານຈາກການສຶກສາ ໄປສູ່ການປະກອບອາຊີບທີ່ເປັນທຳ, ສາມາດເພິ່ງພາຕົນເອງໄດ້ ແລະ ມີຄວາມຍືນຍົງ.

## ເງື່ອນໄຂສະໝັກເຂົ້າຮ່ວມໂຄງການ:

- ✓ ໄວໜຸ່ມລາວ ອາຍຸ **17-25** ປີ ທີ່ອາໃສຢູ່ພາຍໃນນະຄອນຫຼວງວຽງຈັນ ໂດຍບໍ່ຈຳແນກເພດ, ສາສະໜາ ແລະ ຄວາມເຊື່ອ.
- ✓ ຜູ້ທີ່ຢາກສ້າງຄວາມໝັ້ນໃຈໃນຕົນເອງ, ຢາກຄົ້ນຫາອາຊີບ ແລະ ເປົ້າໝາຍຊີວິດ.
- ✓ ຜູ້ທີ່ວ່າງງານ, ກຳລັງຊອກວຽກ ຫຼື ກຳລັງຈະຮຽນຈົບ ມ. 7, ກຳລັງຮຽນວິທະຍາໄລ/ມະຫາວິທະຍາໄລ ປີສຸດທ້າຍ.
- ✓ ສາມາດອ່ານ ແລະ ຂຽນພາສາລາວໄດ້, ສາມາດເຂົ້າຮ່ວມການຝຶກອົບຮົມໄດ້ 2 ຄັ້ງຕໍ່ອາທິດ, ຄັ້ງລະ 3 ຊົ່ວໂມງ, ຕິດຕໍ່ກັນ 7 ອາທິດ (ມີຄ່າເດີນທາງ, ອາຫານໃຫ້).
- ✓ ຜູ້ທີ່ມາຈາກຄອບຄົວທຸກຍາກ, ໄວໜຸ່ມກຳພ້າກຳພອຍ, ດ້ອຍໂອກາດ ຈະພິຈາລະນາເປັນພິເສດ.

## ຜູ້ສະໜັບສະໜູນ:


ບໍລິສັດ ມາສຄ໌ອດ ສາກົນ (ບໍລິສັດຜະລິດເສື້ອຜ້າສາກົນ ແລະ ມີໂຮງງານຢູ່ ສປປ ລາວ) ແລະ ບ້ານຊ່ວຍເຫຼືອເດັກ ເອັສໂອເອັສ ເດັນມາກ.


**ໄລຍະການຈັດຕັ້ງປະຕິບັດໂຄງການ: 2024-2026**